ແອສ໌ທຣິກ (Astérix) ແລະ ໂອບີລິກຊ໌ (Obélix) - ກັບອານາຈັກມັງກອນ



## ຂໍ້ມູນທາງວິຊາການ

- **ຂະໜາດ :** ຄວາມຍາວຂອງເລື່ອງ (1:51 ຊົ່ວໂມງ)
- **ຜູ້ກຳກັບການສະແດງ :** ກີໂຢມ ການເນ (Guillaume Canet)**,** ຈາກຜົນງານຂອງ ເຣເນ ກົດສ໌ຊີນີ (René Goscinny) ແລະ ອານແບກ ອູແດກໂຊ໌ (Albert Uderzo)
- **ສ້າງໂດຍ :** ເທຣຊອກ ຟີມ (Trésor Films)**,** ປາເຕ ຟີມ **(**Pathé Films)
- **ອອກສາຍ :** ໃນ 41 ປະເທດ (ສາຍຢູ່ປະເທດຝຣັ່ງ ໃນເດືອນ ກຸມພາ 2023)
- ສຳລັບຜູ້ຊົມທຸກໄວ

## ສະຫຼຸບເລື່ອງ

ເຮົາຢູ່ໃນຍຸກ 50 ປີ ກ່ອນຄ.ສ ໄດ້ມີຈັກກະພັດດີນີ ແຫ່ງອານາຈັກຈີນ ຖືກຈັບໂຕຄຸມຂັງ ເນື່ອງຈາກມີການກໍ່ກະບົດຂອງ ເຈົ້າຊາຍ ແດງຊິນກີນ (DengTsinQuin). ສ່ວນວ່າເຈົ້າຍິງໄດ້ຮັບການຊ່ວຍເຫຼືອຈາກ ແກຣນເດີມາຍອິດສ໌ (Graindemaïs) ພໍ່ຄ້າຄົນສັນຊາດເຟນີເຊຍ ແລະ ຕາດຫັ້ນ (Tat Han) ທະຫານອາລັກຂາ ຜູ້ຈິງຮັກພັກດີຕໍ່ເຈົ້າຍິງ. ເຈົ້າຍິງ ຟູອີ (Fu-Yi) ເປັນທິດາພຽງອົງດຽວ ຂອງເຈົ້າຈັກກະພັດດີນີ ໄດ້ລົບໜີໄປປະເທດໂກນ (Gaule) ເພື່ອຂໍຄວາມຊ່ວຍເຫຼືອຈາກນັກຮົບຜູ້ເກັ່ງກ້າ ມີນາມວ່າ ແອສ໌ທຣິກ (Astérix) ແລະ ໂອບີລິກຊ໌ (Obélix), ພວກເຂົາມີກຳລັງວັງຊາເໜືອມະນຸດມະນາ ກໍ່ຍ້ອນມີນໍ້າຢາວິເສດ. ແນ່ນອນວ່າ ໂກລົວທັງສອງຂອງພວກເຮົາ ບໍ່ມີວັນແຍກຈາກກັນ ຍິນຍອມໄປຊ່ວຍເຫຼືອເຈົ້າຍິງ ເພື່ອຊ່ວຍຊີວິດມານດາ ແລະ ປົດປ່ອຍປະເທດຊາດຂອງພະອົງ. ແລະແລ້ວ ທຸກຄົນກໍອອກເດີນທາງ ເພື່ອການພະຈົນໄພຄັ້ງໃຫຍ່ຢູ່ທີ່ປະເທດຈີນ.

ແມ້ແຕ່ ເຊຊາກ (César) ແລະ ກອງທັບທະຫານທີ່ເຂັ້ມແຂງ ຍາມໃດກໍກະຫາຍຢາກຂະຫຍາຍອານາເຂດ ໄດ້ອອກເດີນທາງເຊັ່ນດຽວກັນ ໄປຍັງອານາຈັກມັງກອນ.

**ນັກສະແດງຊາຍ ແລະຍິງ**








**Zlatan Ibrahimovic**

## ຄວາມເປັນມາຂອງສຸດຍອດການສ້າງ

ປັດຈຸບັນ ຮູບເງົາເລື່ອງ ແອສ໌ທຣິກ (Astérix) ແລະ ໂອບີລິກຊ໌ (Obélix) : ກັບອານາຈັກມັງກອນ ບໍ່ພຽງແຕ່ໄດ້ຮັບຄວາມນິຍົມສູງສຸດ ຢູ່ບອກສ໌-ອັອບຟິດສ໌ ຝຣັ່ງ ໃນປີ 2023 ເທົ່ານັ້ນ ແຕ່ຍັງໄດ້ຮັບຄວາມນິຍົມເຊັ່ນກັນ ໃນລະດັບໂລກ ແລະ ຍັງສ້າງຕົວເລກຜູ້ເຂົ້າຊົມໄດ້ເຖິງ 4,5 ລ້ານ/ຄົນ.

ຮູບເງົາເລີ່ມສ້າງໃນປີ 2019 ມັນໄດ້ຮັບຜົນກະທົບເຊັ່ນດຽວກັນ ຈາກການແຜ່ລະບາດຂອງພະຍາດໂຄວິດ 19 ແລະ ໃນທີ່ສຸດຮູບເງົາໄດ້ເປີດໂຕ ຫຼັງຈາກ 4 ປີຕໍ່ມາ.

ຢູ່ໃນທີມນັກສະແດງ ນອກຈາກຄົນທີ່ມີຊື່ສຽງຂອງຝຣັ່ງແລ້ວ ຍັງມີນັກສະແດງ, ນັກດົນຕີ, ຄົນດັງຂອງລາຍການໂທລະພາບ ຫຼື ນັກກິລາ ທີ່ເປັນທີ່ຮູ້ຈັກນຳອີກ.

ຖ້າວ່າ ແອສ໌ທຣິກ (Astérix) ແລະ ໂອບີລິກຊ໌ (Obélix) ເປັນຕົວລະຄອນທີ່ທຸກຄົນຮູ້ຈັກກັນດີມາກ່ອນແລ້ວ ແຕ່ວ່າເລື່ອງຂອງອານາຈັກມັງກອນ ມັນຖືກສົມໝຸດແຕ່ງຂຶ້ນມາເພີ່ມໃສ່. ດັ່ງຜູ້ຂຽນ ກົດສ໌ຊີນີ (Goscinny) ແລະ ອູແດ ໂສ໌ (Uderzo) ໄດ້ເຮັດແບບດຽວກັນແຕ່ເບື້ອງຕົ້ນ. ແອສ໌ທຣິກ (Astérix) ໃນແບບຂອງຜູ້ກຳກັບ ກີໂຢມ ການເ (Guillaume Canet) ກໍເຊັ່ນດຽວກັນ ເປັນຕົວລະຄອນທີ່ໃຊ້ຊີວິດຕາມກະແສການປ່ຽນແປງຂອງສັງຄົມ ທີ່ຫັນປ່ຽນມາກົນເຈ.

ເປັນຄັ້ງທີ່ 5 ທີ່ຕົວລະຄອນຄູ່ຫູທີ່ມີຊື່ສຽງ ໄດ້ປະກົດສູ່ຈໍຮູບເງົາອີກຄັ້ງ. ຮູບເງົາໄດ້ອອກເດີນສາຍມາແລ້ວຢູ່ 30 ກວ່າປະເທດ ແລະ ຍັງຈະມີການອອກສາຍອີກຄັ້ງໃໝ່ຢູ່ປະເທດຕ່າງໆໃນທົ່ວໂລກ ຕາມທີ່ໄດ້ຂຶ້ນແຜນມາແລ້ວ ໃນອາທິດຕໍ່ໄປທີ່ຈະມາເຖິງນີ້.

## ຕົ້ນກຳເນີດ

ແອສ໌ທຣິກ (Astérix) ແລະ ໂອບີລິກຊ໌ (Obélix) ເປັນພະເອກຂອງປຶ້ມກະຕູນມາກ່ອນ ແລ້ວຈຶ່ງຖືກນຳມາສ້າງເປັນຕົວລະຄອນຂອງຮູບເງົາ ຫຼື ກະຕູນ.

ຕົວລະຄອນຖືກສ້າງຂຶ້ນໃນປີ 1959 ເຊິ່ງວ່າຜູ້ສ້າງບໍ່ໄດ້ມີແນວຄວາມຄິດຫຍັງເລີຍ, ເຣເນ ກົດສ໌ຊີນີ (René Goscinny) (ຂຽນ) ແລະ ອານແບກ ອູແດກໂສ໌ (Albert Uderzo) (ແຕ້ມ). ພວກເຂົາພຽງແຕ່ຄິດເຖິງປະຫວັດສາດ ຂອງປະເທດຝຣັ່ງ ແລະ ຄົນໂກລົວ ທີ່ອາໄສຢູ່ປະເທດກ່ອນໝູ່ໝົດ.

ອູແດກໂສ໌ (Uderzo) ຄຶດວ່າ ພະເອກຕ້ອງສູງ, ໃຫຍ່, ເປັນວິລະຊົນ ໃນຂະນະດຽວກັນ ກົດສ໌ຊີນີ (Goscinny) ພັດຄິດກົງກັນຂ້າມ ພະເອກ ຕ້ອງເປັນຄົນຕະຫຼົກ ແລະ ເປັນຜູ້ຊາຍໂຕນ້ອຍ. ເພື່ອໃຫ້ຕົກລົງກັນໄດ້ ທັງສອງເລີຍສ້າງພະເອກຂຶ້ນສອງຄົນ, ຄົນໜຶ່ງນ້ອຍ, ອີກຄົນໜຶ່ງແຂງແຮງ. ພວກເຂົາເລີຍກາຍມາເປັນ , ຜູ້ຢູ່ອາໄສໃນໝູ່ບ້ານນ້ອຍໆໂກລົວ ມີຄວາມເກັ່ງກ້າສາມາດ ທີ່ບໍ່ມີໃຜເອົາຊະນະເຂົາໄດ້ ຍ້ອນດື່ມນ້ຳຢາວິເສດຂອງໝໍຜີ ປາໂນຣາມິກສ໌ (Panoramix).

ນັບແຕ່ມື້ສ້າງພຸ້ນມາ ປຶ້ມກະຕູນການພະຈົນໄພ ຂອງ ແອສ໌ທຣິກ (Astérix) ແລະ ໂອບີລິກຊ໌ (Obélix) , ຈຳນວນຫຼາຍກວ່າ 380 ລ້ານ/ຫົວ ໄດ້ວາງຂາຍໃນທົ່ວໂລກ. ປຶ້ມກະຕູນຍັງໄດ້ຖືກແປພິມ ເປັນ 111 ພາສາ ແລະ ພາສາທ້ອງຖິ່ນ. ປຶ້ມໃໝ່ອອກແຕ່ລະເທື່ອ ຈະຖືກພິມເປັນຈຳນວນທັງໝົດ 5 ລ້ານ/ຫົວ ໃນນັ້ນມີຈຳນວນ 2 ລ້ານ/ຫົວ ສຳລັບຕະຫຼາດຂອງປະເທດທີ່ໃຊ້ພາສາຝຣັ່ງ.

## ຈຸດສົນໃຈຂອງປຶ້ມກະຕູນ

ປຶ້ມກະຕູນຝຣັ່ງເປັນທີ່ຮູ້ຈັກມາໄດ້ 25 ປີ ໃນເລື່ອງຄວາມມີຊີວິດຊີວາຂອງສິລະປະ ໂດຍມາຈາກຄວາມຫຼາກຫຼາຍຂອງຮູບແບບ ແລະ ປະເພດ. ຄວາມສົມບູນແບບຂອງປຶ້ມກະຕູນ ແມ່ນມາຈາກຄວາມຫຼາກຫຼາຍຂອງຜູ້ຂຽນນໍາ. ຄາດວ່າຢູ່ຝຣັ່ງມີນັກຂຽນ-ນັກແຕ້ມ ຢູ່ລະຫວ່າງ 1 500 ຫາ 3 000 ຄົນ.

ປະເພດປຶ້ມກະຕູນສໍາລັບຕະຫຼາດຝຣັ່ງ ມີເນື້ອໃນກວ້າງ : ມອງກາ, ຕະຫຼົກ, ກະຕູນໄວໜຸ່ມ ແລະ ກະຕູນປະເພດອື່ນໆ ມີຍອດຂາຍຫຼາຍກວ່າ 84 ລ້ານ/ຫົວ ໃນປີ 2022 ແລະ ເປັນລາຍຮັບມູນຄ່າ 921 ລ້ານ ຢູໂລ. ໃນປີ 2021 ປຶ້ມ ແອສ໌ທຣິກ (Astérix) ແລະ ເລີ ຄຣິດຝົງ (le Griffon) ຂາຍໄດ້ 1,2 ລ້ານ/ຫົວ ພາຍໃນເດືອນດຽວ.

## ຈຸດສົນໃຈຂອງຮູບເງົາ

ໃນປີ 2022 ຮູບເງົາຝຣັ່ງງດຶງດູດຜູ້ເຂົ້າຊົມໄດ້ເຖິງ 27 ລ້ານ/ຄົນ ແລະ ສ້າງລາຍໄດ້ຈາກຕ່າງປະເທດ 167,4 ລ້ານ ຢູໂຣ. ຮູບເງົາຝຣັ່ງຍັງເຂົ້າສາຍຕາມງານເທດສະການຕ່າງໆ ແລະ ສາມາດເຂົ້າຊົມທາງອິນເຕີເນັດ ໂດຍຜ່ານແພັລດຄຟອມຕ່າງໆ ແລະ ໂດດເດັ່ນເລື່ອງຄວາມຫຼາກຫຼາຍຂອງຮູບເງົາທີ່ມີໃຫ້ ຕັ້ງແຕ່ຮູບເງົາຕະຫຼົກ ໄປຈົນເຖິງຮູບເງົາພະຈົນໄພ ລວມທັງຮູບເງົາແບບຈິນຕະນາການ ຫຼືວ່າ ຮູບເງົາທາງປະຫວັດສາດ. ສິລະປະ ຂັ້ນທີ 7 (ຮູບເງົາ) ເຊິ່ງເປັນສັນຍາລັກຂອງຄວາມຄິດສ້າງສັນ ໄດ້ຮັບການສະໜັບສະໜູນຈາກລັດຖະບານຝຣັ່ງເຊັ່ນກັນ.